ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1151 /ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 06 ກັນຍາ 2019

## ແຈ້ງການ

ເຖິງ: ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ.

ເລື່ອງ: ໃຫ້ເອົາໃຈໃສ່ຄຸ້ມຄອງລາຄາສິນຄ້າ ໃນທ້ອງຕະຫຼາດຢູ່ພາຍໃນແຂວງຂອງຕົນ ເພື່ອຫຼີກເວັ້ນການສວຍໂອກາດຂຶ້ນລາຄາສິນຄ້າຕາມລຳພັງໃຈໃນຊ່ວງໄລຍະນ້ຳຖ້ວມ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ;
- ອີງຕາມ ຂໍ້ຕົກລົງ ເລກທີ 71/ນຍ, ລົງວັນທີ 06 ຕຸລາ 2017 ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳວຽກງານຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.

ເພື່ອເຮັດໃຫ້ລາຄາສິນຄ້າໃນທ້ອງຕະຫຼາດມີສະຖຽນລະພາບເວົ້າລວມ, ເວົ້າສະເພາະແມ່ນເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້, ຜົນປະໂຫຍດຂອງລັດ ແລະ ຜູ້ດຳເນີນທຸລະກິດ ແລະ ເພື່ອຫຼີກເວັ້ນການສວຍໂອກາດຂຶ້ນລາຄາສິນຄ້າຕາມລຳພັງໃຈຂອງຜູ້ປະກອບການໃນຊ່ວງໄລຍະນ້ຳຖ້ວມ.

### ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:

1. ປະສານສົມທົບກັບຂະແໜງການກ່ຽວຂ້ອງ ເອົາໃຈໃສ່ຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ບໍ່ໃຫ້ມີການຂຶ້ນລາຄາຕາມລຳພັງໃຈ ແລະ ປະຕິບັດມາດຕະການຄຸ້ມຄອງລາຄາຢ່າງເຂັ້ມງວດ. ພ້ອມນັ້ນ, ກໍ່ຕ້ອງເອົາໃຈໃສ່ຕິດຕາມສະພາບການເໜັງຕີງຂອງລາຄາສິນຄ້າຕົ້ນຕໍໃນທ້ອງຕະຫຼາດຢ່າງເປັນປົກກະຕິ ໂດຍສະເພາະແມ່ນສິນຄ້າທີ່ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ;
2. ເອົາໃຈໃສ່ຄຸ້ມຄອງລາຄາສິນຄ້າສະບຽງອາຫານ ປະເພດເຂົ້າກິນ, ປະເພດຊີ້ນ (ໝູ, ງົວ, ຄວາຍ, ໄກ່, ປາ) ແລະ ພືດຜັກຕ່າງໆ ຢູ່ພາຍໃນແຂວງຂອງຕົນໃຫ້ໄປຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງດັດສົມຂອງລັດ ໃນແຕ່ລະໄລຍະ ບົນພື້ນຖານດຳລັດ 474/ນຍ ແລະ ລະບຽບການກ່ຽວຂ້ອງ. ພ້ອມນັ້ນ, ຕ້ອງຄິດໄລ່ໂຄງປະກອບລາຄາໃນແຕ່ລະຂອດໄດ້ຢ່າງຊັດເຈນ (ນັບແຕ່ຂອດຕົ້ນທຶນການຜະລິດ, ຂອດຂາຍຍົກ ແລະ ຂາຍຍ່ອຍ) ເພື່ອຫຼີກເວັ້ນການສວຍໂອກາດຂຶ້ນລາຄາໂດຍສະເພາະ:
   - ສິນຄ້າປະເພດເຂົ້າກິນ: ແມ່ນໃຫ້ເອົາໃຈໃສ່ຄຸ້ມຄອງ ນັບແຕ່ຂອດເກັບຊື້ຈາກຊາວນາ (ຜູ້ຜະລິດ), ຂອດໂຮງສີ, ຂອດຂາຍຍົກ ແລະ ຂາຍຍ່ອຍ ຕາມທ້ອງຕະຫຼາດ;

- ສິນຄ້າປະເພດຊີ້ນ: ແມ່ນໃຫ້ເອົາໃຈໃສ່ຄຸ້ມຄອງ ນັບແຕ່ຂອດລ້ຽງ (ລາຄາໝູເປັນຢູ່ໜ້າຟາມ), ຂອດນາຍຮ້ອຍ (ຂາຍຍົກ) ແລະ ຂອດລູກຂຽງ (ຂາຍຍ່ອຍ);
- ສ່ວນປະເພດຜັກຜັກ ແລະ ສະບຽງອາຫານຕ່າງໆ ແມ່ນໃຫ້ເອົາໃຈໃສ່ຄຸ້ມຄອງ ແລະ ຕິດຕາມຂອດເກັບຊື້ຈາກຊາວກະສິກອນ ແລະ ຂອດຂາຍຍ່ອຍ;

3. ແຕ່ງຕັ້ງພະນັກງານໝູນວຽນກັນ ລົງສົມທົບກັບ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ແລະ ຄະນະຄຸ້ມຄອງຈັດສັນຕະຫຼາດ ເພື່ອຕິດຕາມ, ກວດກາ, ຄຸ້ມຄອງ ຢ່າງເປັນປະຈຳ ໂດຍສະເພາະຕະຫຼາດຫຼັກ;
4. ໃນກໍລະນີຫາກພົບເຫັນວ່າມີການລະເມີດ ຫຼື ຝ່າຝືນ ແມ່ນໃຫ້ໃຊ້ມາດຕະການຕາມໝວດທີ 6 ທີ່ໄດ້ກຳນົດໃນດຳລັດ 474/ນຍ, ລົງວັນທີ 18 ພະຈິກ 2010 ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ;
5. ປະສານສົມທົບກັບຜູ້ຜະລິດ, ຜູ້ນຳເຂົ້າ ແລະ ຜູ້ຈຳໜ່າຍສິນຄ້າເພື່ອແຈ້ງລາຄາຕົ້ນທຶນຜະລິດ, ລາຄານຳເຂົ້າ, ລາຄາຂາຍຍົກ ແລະ ຂາຍຍ່ອຍ ເພື່ອເປັນບ່ອນອີງໃນການຕິດຕາມ-ກວດກາ ແຕ່ລະໄລຍະ, ຫຼີກລ້ຽງການປັບຂຶ້ນລາຄາສິນຄ້າຕາມລຳພັງໃຈ ທີ່ບໍ່ສົມເຫດສົມຜົນຂອງຜູ້ປະກອບການ ໂດຍສະເພາະໃນຊ່ວງໄລຍະນ້ຳຖ້ວມ;
6. ປະສານສົມທົບກັບຂະແໜງການກ່ຽວຂ້ອງ ເພື່ອດຸ່ນດ່ຽງ ການຕອບສະໜອງ ແລະ ຄວາມຕ້ອງການ (ສິນຄ້າປະເພດເຂົ້າກິນ) ໂດຍສະເພາະແຂວງທີ່ຖືກຜົນກະທົບຈາກໄພນ້ຳຖ້ວມ;
7. ເປັນເຈົ້າການເຜີຍແຜ່ ແລະ ຊີ້ນຳຜູ້ປະກອບການໃຫ້ເຂົ້າໃຈຕໍ່ແນວທາງນະໂຍບາຍກໍ່ຄືລະບຽບການທີ່ລັດວາງອອກໃນແຕ່ລະໄລຍະ, ພ້ອມທັງຊຸກຍູ້ໃຫ້ບັນດາຜູ້ປະກອບການສະໜອງສິນຄ້າປະເພດສະບຽງອາຫານທີ່ຈຳເປັນດັ່ງກ່າວໃຫ້ພຽງພໍກັບຄວາມຕ້ອງການໃນແຕ່ລະໄລຍະ;
8. ລາຍງານຜົນການຈັດຕັ້ງປະຕິບັດໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ເພື່ອເປັນຂໍ້ມູນໃນການລາຍງານຂັ້ນເທິງ;
9. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຣ.ທ. ລັດຖະມົນຕີ

ສົມຈິດ ອິນທະມິດ

<u>ປອນນຳສົ່ງ:</u>

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;;
- ຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ;
- ກະຊວງກະສິກຳ ແລະ ປ່າໄມ້;
- ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງ;
- ບັນດາກົມ, ຫ້ອງການ, ສະຖາບັນ ອອ້ມຂ້າງກະຊວງ.